**ມິຊຊາກາງຄືນສົມໂພດປາສກາ**

**ວັນທີ 16 ເມສາ 2022**



**ພຣະວໍລະສານໂດຍນັກບຸນລູກາ 24, 1-12**

ແຕ່ເຊົ້າໆມື້ຕົ້ນອາທິດ, ພວກນາງໄດ້ພາກັນໄປທີ່ຄູຫາພ້ອມດ້ວຍເຄື່ອງຫອມທີ່ໄດ້ຈັດຕຽມໄວ້ແລ້ວ. ພວກນາງໄດ້ເຫັນແຜ່ນຫີນກິ້ງອອກຈາກໜ້າຄູຫາ. ພວກນາງເຂົ້າໄປໃນຄູຫາແຕ່ບໍ່ໄດ້ເຫັນພຣະສົບຂອງພຣະເຢຊູເຈົ້າ. ເມື່ອພວກນາງກຳລັງຊຶງຢູ່ນັ້ນ ກໍມີບຸລຸດສອງຄົນທົງເຄື່ອງຂາວເຫລື້ອມປະຈັກອອກມາ.

ພວກນາງມີຄວາມຢ້ານກົວ ແລະກົ້ມໜ້າລົງດິນ. ບຸລຸດທັງສອງຈຶ່ງກ່າວວ່າ: “ເປັນຫຍັງພວກເຈົ້າຈຶ່ງມາຊອກຫາຄົນເປັນໃນໝູ່ຄົນຕາຍ? ພຣະອົງບໍ່ຢູ່ທີ່ນີ້, ພຣະອົງໄດ້ກັບຄືນຊີບແລ້ວ. ຈົ່ງລະລຶກເຖິງວາຈາທີ່ພຣະອົງໄດ້ກ່າວກັບພວກທ່ານ, ເມື່ອເວລາຍັງຢູ່ແຂວງກາລີເລ ວ່າດັ່ງນີ້: “ບຸດແຫ່ງມະນຸດຈຳຕ້ອງຖືກມອບໃນມືຂອງຄົນບາບ, ຖືກຄຶງກາງເຂນແລະກັບເປັນຄືນມາໃນວັນທີສາມ”. ພວກນາງຈື່ຈຳຄຳເວົ້າຂອງພຣະອົງໄດ້.

ເມື່ອຫລົບມາແຕ່ຄູຫາ, ພວກນາງໄດ້ເລົ່າເຫດການນີ້ສູ່ພວກສາວົກທັງສິບເອັດ ແລະຄົນອື່ນໆຟັງ. ພວກນາງເຫລົ່ານັ້ນແມ່ນນາງມາຣີອາມັກດາເລນາ, ນາງຢໍອັນນາ ແລະນາງມາຣີອາ ແມ່ຂອງຢາໂກເບ. ສ່ວນຜູ້ຍິງອື່ນທີ່ຢູ່ນຳພວກເຂົາ ກໍໄດ້ເລົ່າເຫດການນີ້ສູ່ພວກອັກຄະສາວົກຟັງດ້ວຍ. ແຕ່ພວກສາວົກບໍ່ເຊື່ອຍ້ອນຖືວ່າ: ຄວາມບອກເລົ່ານີ້ເປັນເລື່ອງປັ້ນແຕ່ງຂຶ້ນ. ເປໂຕຈຶ່ງລຸກຂຶ້ນແລ່ນໄປຄູຫາ. ເມື່ອກົ້ມສ່ອງເບິ່ງກໍເຫັນແຕ່ແພຫໍ່ສົບ ຈຶ່ງກັບເມືອເຮືອນດ້ວຍຄວາມອັດສະຈັນໃຈເຖິງສິ່ງທີ່ໄດ້ເປັນມາ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນທີ່ພວກເຮົາລໍຖ້າເປັນເວລາສີ່ສິບວັນກໍໄດ້ມາຮອດ ອັນແມ່ນວັນແຫ່ງໄຊຊະນະຂອງພຣະເຢຊູເຈົ້າເໜືອບາບແລະຄວາມຕາຍ. ວັນຊຶ່ງພຣະອົງກັບເປັນຄືນມາຈາກຄວາມຕາຍ. ເປັນວັນຊຶ່ງພຣະກຣິສຕະຈັກທັງມວນຊຶ່ງໄດ້ຮ່ວມທໍລະມານແລະຕາຍກັບພຣະອົງຜ່ານທາງສິນລ້າງບາບໄດ້ມີຄວາມຍິນດີ. ຍ້ອນພວກເຂົາກໍໄດ້ຮ່ວມກັບເປັນຄືນມາກັບພຣະອົງ.

ມີສິ່ງໜຶ່ງທີ່ເປັນຕາຄິດໃນພຣະວໍລະສານຊຶ່ງພວກເຮົາຫາກໍໄດ້ຟັງນີ້ຄື ແມ່ນພວກຜູ້ຍິງທີ່ໄດ້ພາກັນໄປຢາມພຣະສົບຂອງພຣະເຢຊູເຈົ້າຢູ່ຄູຫາແຕ່ເຊົ້າໆ. ແລະກໍແມ່ນພວກນາງຊຶ່ງເປັນກຸ່ມທໍາອິດທີ່ໄດ້ຟັງຄໍາປະກາດແຫ່ງການກັບເປັນຄືນມາຂອງພຣະອົງ. ແລະກໍແມ່ນພວກນາງທີ່ໄດ້ນໍາຂ່າວດີແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າໄປປະກາດໃຫ້ພວກລູກສິດຄົນອື່ນໄດ້ຮູ້ຈັກ. ສິ່ງນີ້ສະແດງໃຫ້ພວກເຮົາເຫັນເຖິງຄວາມຮັກຮ້ອນຮົນຊຶ່ງພວກຜູ້ຍິງນີ້ໄດ້ມີຕໍ່ພຣະເຢຊູເຈົ້າ. ຍ້ອນຄວາມຮັກນີ້, ພວກເຂົາຈຶ່ງບໍ່ຢ້ານກົວຕໍ່ອຸປະສັກແລະຕໍ່ອັນຕະລາຍຊຶ່ງອາດຈະເກີດຂຶ້ນໄດ້. ຍ້ອນພວກທະຫານໂຣມັນກໍາລັງຊອກຫາຈັບພວກລູກສິດຂອງພຣະເຢຊູເຈົ້າ. ຮູບພາບຂອງພວກຜູ້ຍິງນີ້ທໍາໃຫ້ພວກເຮົາຄິດຫາບັນດາຜູ້ຍິງສະຫລາດທີ່ຕຽມພ້ອມນໍ້າມັນແລະໄຟໃນຕະກຽງເພື່ອອອກໄປຕ້ອນຮັບເຈົ້າບ່າວ. ແລະເມື່ອເຈົ້າບ່າວມາຮອດ, ພວກນາງກໍມີຄວາມຍິນດີທີ່ໄດ້ພົບເຈົ້າບ່າວແລະໄດ້ເຂົ້າຮ່ວມງານວິວາຫະມຸງຄຸນຮ່ວມກັບເຈົ້າບ່າວ.

ຮູບພາບພວກຜູ້ຍິງຊຶ່ງໄປຄູຫາແຕ່ເຊົ້າໆ ວັນທີ່ພຣະເຢຊູເຈົ້າກັບເປັນຄືນມານີ້ກໍເປັນຄໍາຖາມສໍາລັບພວກເຮົາຜູ້ເປັນສິດຂອງພຣະອົງແລະເຊື່ອໃນພຣະອົງ. ພວກເຮົາໄດ້ມີຄວາມຮັກຮ້ອນຮົນໃຈຢາກໄປພົບພຣະເຢຊູເຈົ້າວັນທີ່ພຣະອົງກັບເປັນຄືນມາບໍ? ພວກເຮົາຢາກຟັງສຽງຂອງພຣະອົງທີ່ກ່າວກັບພວກເຮົາເໝືອນກັບພຣະອົງໄດ້ກ່າວກັບພວກຜູ້ຍິງທີ່ຄູຫາບໍວ່າ: “ເປັນຫຍັງພວກເຈົ້າຈຶ່ງມາຊອກຫາຄົນເປັນໃນໝູ່ຄົນຕາຍ?” ພວກເຮົາຢາກນໍາເອົາຂ່າວດີແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າໄປປະກາດໃຫ້ຄົນອື່ນຮູ້ຈັກບໍ? ຫລືພວກເຮົາເປັນເໝືອນພວກລູກສິດຄົນອື່ນທີ່ຍັງບໍ່ເຊື່ອແລະບໍ່ກ້າອອກໄປພົບພຣະອົງ?

**ພາວະນາ**

ໂອພຣະເຢຊູເຈົ້າ, ໃນວັນທີ່ພຣະອົງກັບເປັນຄືນມານີ້, ໂຜດຊ່ວຍລູກໃຫ້ກັບເປັນຄືນມາຮ່ວມກັບພຣະອົງ. ດ້ວຍການອອກຈາກຄວາມຢ້ານກົວ, ຄວາມສົງໃສບໍ່ຍອມເຊື່ອ ເພື່ອໄປພົບພຣະອົງແລະຟັງສຽງຂອງພຣະອົງເໝືອນດັ່ງພວກຜູ້ຍິງໃນພຣະວໍລະສານວັນນີ້ດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ